ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດບັນທຶກ

## ກອງປະຊຸມ ປຶກສາຫາລື ການຂໍແລກປ່ຽນທີ່ດິນຫ້ອງການບ້ານ ດອນກອຍ ກັບ ທີ່ດິນຂອງບຸກຄົນ.

ໃນວັນທີ 26 ເມສາ 2024; ເວລາ 9:00 ໂມງ, ທີ່ສຳນັກງານປົກຄອງເມືອງສີສັດຕະນາກ ໄດ້ເປີດກອງປະຊຸມພາຍໃຕ້ການເປັນປະທານຂອງ **ທ່ານ ເດດສົງຄາມ ທຳມະວົງ ເຈົ້າເມືອງ ສີສັດຕະນາກ**, ເຊິ່ງມີຜູ້ເຂົ້າຮ່ວມມາຈາກ ພາກສ່ວນທີ່ກ່ຽວຂ້ອງຄື : ພະແນກການເງິນ ນະຄອນຫລວງວຽງຈັນ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພາກສ່ວນທີ່ກ່ຽວຂ້ອງ ຂັ້ນເມືອງ ລວມທັງໝົດ 12 ທ່ານ, ຍິງ 1 ທ່ານ.

ເພື່ອປຶກສາຫາລື ກ່ຽວກັບການປະຕິບັດຕາມໜັງສືທາງລັດຖະການຂອງນະຄອນຫຼວງ ວ່າດ້ວຍການແລກປ່ຽນທີ່ດິນຫ້ອງ ການບ້ານ ດອນກອຍ ກັບ ທີ່ດິນຂອງບຸກຄົນ ແຕ່ພາກສ່ວນໄດ້ປຶກສາຫາລື ແລະ ປະກອບຄຳເຫັນດັ່ງນີ້ :

1) ທ່ານ ສິງຫາ ວົງພັກດີ ຫົວໜ້າຫ້ອງວ່າການເມືອງສີສັດຕະນາກ ໄດ້ກ່າວຈຸດປະສົງ ແລະ ລາຍງານການຈັດຕັ້ງປະຕິບັດວຽກດັ່ງກ່າວໃນໄລຍະຜ່ານມາ ກ່ຽວກັບຄວາມເປັນໄປໄດ້ໃນການແລກປ່ຽນທີ່ດິນຫ້ອງການບ້ານ ດອນກອຍ ກັບ ທີ່ດິນຂອງບຸກຄົນ.
2) ທ່ານ ຈັນສະໝອນ ແສງພະຈັນ ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລາຍງານການລົງສຳຫຼວດ ແລະ ປະເມີນຕົວຈິງ.
3) ທ່ານ ນາຍບ້ານ ດອນກອຍ ລາຍງານຄວາມຫຍຸ້ງຍາກຂອງຫ້ອງການບ້ານເກົ່າ.
4) ທ່ານ ຈັນສະຫວ່າງ ຕາງໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ ປະກອບຄຳເຫັນວ່າຕ້ອງເອົາຂໍ້ມູນທຸກຢ່າງຂອງຕອນດິນທັງສອງຕອນທຸກຢ່າງໃໝ່ ແລະ ປະກາດໃຫ້ປະຊາຊົນຮັບຮູ້ ເພື່ອບໍ່ໃຫ້ເກີດຜົນກະທົບພາຍຫຼັງ.
5) ທ່ານ ທົງຈົ້ງ ອຸ່ສະຫວ່າງ ຕາງໜ້າພະແນກການເງິນນະຄອນຫຼວງວຽງຈັນ ປະກອບຄຳເຫັນ ການແລກປ່ຽນທີ່ດິນດັ່ງກ່າວຕາມລະບຽບການກໍສາມາດແລກປ່ຽນໄດ້ເພື່ອຜົນປະໂຫຍດຂອງບ້ານ ກໍຄືພໍ່ແມ່ປະຊາຊົນ ແຕ່ຂັ້ນຕອນປະກອບເອກະສານຕ້ອງໃຫ້ໄປຕາມຂັ້ນຕອນລະອຽດ ແລະ ທາງພະແນກການເງິນນະຄອນຫຼວງວຽງຈັນ ຈະສະໜອງລາຍລະອຽດກ່ຽວການປະກອບເອກະສານໃຫ້ເມືອງເພື່ອຂໍທັບປ່ຽນ.

**ທ່ານປະທານກອງປະຊຸມ ສະຫລຸບ ສັງລວມຄື :**

1. ຕົກລົງເຫັນດີໃຫ້ມີການແລກປ່ຽນ.
2. ໃຫ້ສອງພະແນກການຄື ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ ແລະ ພະແນກການເງິນ ນວ ເປັນຜູ້ຊ່ວຍທາງເມືອງ ໃນການຕອບສະໜອງເອກະສານ ແລະ ແນະນຳຂັ້ນຕອນໃຫ້ຖືກຕ້ອງຕາມລະບຽບຫລັກການ.
3. ໃຫ້ຫ້ອງວ່າການຮ່າງໜັງສືສະເໜີ ເພື່ອຂໍການພິຈາລະນາຕົກລົງ ຈາກການນຳນະຄອນຫລວງວຽງຈັນ, ໃຫ້ລະບຸຜົນປະໂຫຍດທີ່ໄດ້ຮັບຈາກການແລກປ່ຽນ ແລະ ສະເໜີ ຂໍຍົກເວັ້ນຄ່າທຳນຽມ ແລະ ອາກອນການມອບໂອນສິດນຳໃຊ້ທີ່ດິນ.
4. ກຳນົດເວລາ 2 ອາທິດໃຫ້ໄດ້ລາຍງານການນຳ ນະຄອນຫລວງວຽງຈັນ.

ກອງປະຊຸມ ໄດ້ປິດລົງໃນເວລາ 11:00 ໂມງ ຂອງວັນດຽວກັນ
ດັ່ງນັ້ນ ; ຈຶ່ງໄດ້ເຮັດບົດບັນທຶກນີ້ໄວ້ເປັນຫລັກຖານ ໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

**ປະທານກອງປະຊຸມ**

ເດດສົງຄາມ ທຳມະວົງ

**ບັນທຶກ**

ສິງຫາ ວົງພັກດີ